ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1556 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 22 ພຶດສະພາ 2021

# ແຈ້ງການ

ຮຽນ: ບັນດາທ່ານ ຫົວໜ້າຫ້ອງການ, ຫົວໜ້າກົມ, ຜູ້ອຳນວຍການສະຖາບັນ, ສຳນັກພິມສຶກສາ ແລະ ກິລາ ແລະ ສູນ

ເລື່ອງ: ການມາປະຈຳການຂອງພະນັກງານພາຍໃນສຳນັກກະຊວງສຶກສາທິການ ແລະ ກິລາ

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ໃນໄລຍະ ວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021 ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021;
- ອີງຕາມ ແຈ້ງການຂອງກະຊວງສາທາລະນະສຸກກ່ຽວກັບການກຳນົດເຂດລະບາດ ເພື່ອປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 0488/ສທ, ລົງວັນທີ 20 ພຶດສະພາ 2021;
- ອີງຕາມ ແຈ້ງການຂອງຫົວໜ້າຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ ກ່ຽວກັບການສືບຕໍ່ເພີ່ມທະວີມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ໃນໄລຍະ ວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021 ຂອງຂະແໜງສຶກສາ ແລະ ກິລາ ສະບັບເລກທີ 470/ສສກ, ລົງວັນທີ 20 ພຶດສະພາ 2021.

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບກ່ຽວກັບການມາປະຈຳ ການຂອງພະນັກງງານພາຍໃນສຳນັກກະຊວງສຶກສາທິການ ແລະ ກິລາ ໃນໄລຍະ ສືບຕໍ່ປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ແລະ ຜ່ອນຜັນບາງມາດຕະການ ຢູ່ບາງເຂດ ລະຫວ່າງ ວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021. ສະນັ້ນ, ເພື່ອເປັນການສືບຕໍ່ວຽກງານພາຍໃນສຳນັກງານກະຊວງສຶກສາທິການ ແລະ ກິລາ ໃຫ້ດຳເນີນໄປຢ່າງປົກກະຕິ ພ້ອມທັງຍົກລະດັບການປະຕິບັດມາດຕະການຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ຜ່ອນຜັນບາງມາດຕະການ, ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຈຶ່ງອອກແຈ້ງການດັ່ງນີ້:

1. ໃຫ້ບັນດາຫ້ອງການ, ກົມ, ສະຖາບັນ ແລະ ສູນ ພາຍໃນສຳນັກກະຊວງ ແຈ້ງໃຫ້ພະນັກງານ-ລັດຖະກອນ ແລະ ຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ ຜັດປ່ຽນກັນມາປະຈຳການແຕ່ລະມື້ລັດຖະການ ຄື: ໃນແຕ່ລະຫ້ອງການ, ກົມ, ສະຖາບັນ ແລະ ສູນ ໃຫ້ມາປະຈຳການມື້ໜຶ່ງບໍ່ໃຫ້ເກີນ 3-4 ທ່ານ ໃນນີ້ ຂັ້ນຄະນະກົມ 1 ທ່ານ/ມື້, ຂັ້ນພະແນກ ແລະ ວິຊາການ 2-3 ທ່ານ/ມື້ ນັບແຕ່ວັນທີ 24 ພຶດສະພາ ຫາ 4

ມິຖຸນາ 2021. ຖ້າກໍລະນີມີວຽກຈຳເປັນ ຫຼື ຮີບດ່ວນທີ່ຕ້ອງການເພີ່ມຈຳນວນພົນທີ່ມາປະຈຳການໃຫ້ຂໍອະນຸຍາດຈາກຄະນະສະເພາະກິດກະຊວງກ່ອນ. ພ້ອມນີ້, ຫ້າມບໍ່ໃຫ້ພະນັກງານ-ລັດຖະກອນ ແລະ ຊ່ຽວຊານ ເອົາລູກນ້ອຍ ແລະ ບຸກຄົນອື່ນມາປະຈຳການນຳຕົນເອງຢ່າງເດັດຂາດ.

2. ຖ້າພະນັກງານ-ລັດຖະກອນ ທ່ານໃດມີພູມລຳເນົາຢູ່ເຂດພື້ນທີ່ ທີ່ມີການຕິດເຊື້ອ (ເຂດແດງ) ຫຼື ເຂດທີ່ມີຄວາມສ່ຽງ (ເຂດເຫຼືອງ) ໃຫ້ປະຕິບັດຕາມມາດຕະການຂອງ ຄະນະສະເພາະກິດທ້ອງຖິ່ນຢ່າງເຂັ້ມງວດ; ຖ້າພະນັກງານ-ລັດຖະກອນທ່ານໃດມີສະມາຊິກໃນຄອບຄົວທີ່ມີປະຫວັດສຳພັດໃກ້ຊິດກັບຄົນທີ່ຢັ້ງຢືນ ການຕິດເຊື້ອໂຄວິດ-19 ແມ່ນໃຫ້ຈຳກັດບໍລິເວນຕົນເອງຢູ່ເຮືອນ 14 ວັນ; ໃນກໍລະນີ ມີພະນັກງານ-ລັດຖະກອນທ່ານໃດມີສະມາຊິກໃນຄອບຄົວທີ່ເປັນກຸ່ມສ່ຽງ ແລະ ໄດ້ໄປກວດຫາເຊື້ອໂຄວິດ-19 ແລ້ວ ແຕ່ຍັງບໍ່ທັນໄດ້ຜົນກວດ ຫຼື ຜົນກວດອອກມາເປັນລົບ (ບໍ່ຕິດເຊື້ອ) ແມ່ນໃຫ້ສືບຕໍ່ຈຳກັດບໍລິເວນ ຕົນເອງໃຫ້ຄົບ 14 ວັນເຊັ່ນດຽວກັນ. ພະນັກງານ-ລັດຖະກອນທີ່ຈຳກັດບໍລິເວນຕົນເອງຢູ່ເຮືອນໃນໄລຍະນີ້ ໃຫ້ເຮັດວຽກທາງໄກຢູ່ເຮືອນຜ່ານລະບົບສື່ສານທາງເອເລັກໂຕຣນິກ, ອີເມວ, ລະບົບປະຊຸມທາງໄກ ແລະ ວິທີການອື່ນທີ່ເໝາະສົມ;

3. ບໍ່ອະນຸຍາດໃຫ້ຈັດກອງປະຊຸມ ຫຼື ກິດຈະກຳຕ່າງໆ ທີ່ມີຈຳນວນຜູ້ເຂົ້າຮ່ວມເກີນກວ່າ 10 ທ່ານຂຶ້ນໄປ, ກໍລະນີຈຳເປັນຕ້ອງໄດ້ຈັດກິດຈະກຳໃດໜຶ່ງຕ້ອງໄດ້ຂໍອະນຸມັດຈາກຄະນະສະເພາະກິດກະຊວງ ແລະ ຕ້ອງປະຕິບັດມາດຕະການຂອງຄະນະສະເພາະກິດວາງອອກຢ່າງເຂັ້ມງວດເປັນຕົ້ນ ແທກອຸນຫະພູມ, ການຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ໝັ່ນລ້າງມືໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອ;

4. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນຮອດວັນທີ 4 ມິຖຸນາ 2021. ຖ້າມີການປ່ຽນແປງຫ້ອງການຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ.

ຫົວໜ້າຫ້ອງການ

ນ.ດາລາວອນ ກິດຕິພັນ